Chifeng Gold Partners with Lao Mining Development State Enterprise






Posted in News, Press Release

# Chifeng Gold Partners with Lao Mining Development State Enterprise

12 July 2022

**Vientiane Capital, Laos** – On 11 July 2022, Chifeng Jilong Gold entered into an historical cooperation agreement with Lao Mining Development State Enterprise (LMD). The agreement will enable the parties to focus on exploration and development of mineral resources to develop large-scale future production in Lao PDR.

"This agreement highlights Chifeng's enduring commitment to growth and the development of the mining sector in Lao PDR," said Mr Paul Harris, Executive President Chifeng Jilong Gold, General Manager Lane Xang Minerals Limited (LXML).

"We are working with the Lao Government to develop more successful projects like Sepon. Chifeng and LMD will conduct exploration to start another world class mining operation to bring mutual benefit to all our stakeholders, especially the Lao people."

"Together with LMD and the Lao Government, we are building a solid foundation to grow Chifeng's significant investment in Lao PDR. We will maintain the same international standards we are renowned for, particularly regarding safety, environment, community development, and developing Lao employees."

"The agreement encourages exploration of areas with mineral potential, before entering into concession agreements," said Mr Boungnong Sidavong, Managing Director of Lao Mining Development State Enterprise."

"LMD is confident that Chifeng's expertise, evident in the strong performance of the Sepon Gold-Copper Project, will ensure success. Identifying mineral potential is critical, and support from government, technical professionals, and local communities will be essential in developing the mining sector in Lao PDR."

LXML and the Lao Government have enjoyed a long and successful relationship over almost 30 years. Sepon mine proudly maintains the highest international standards, is consistently rated A+ by the Ministry of Energy and Mines, and is widely considered a role model for other mining companies in Lao PDR.

Chifeng Jilong Gold Mining Company Limited owns a 90 per cent share in Lane Xang Minerals Limited (LXML), which owns and operates the Sepon mine in Savannakhet Province.

Since operations commenced in 2003, LXML Sepon has produced over 1.1 million tons of copper cathode, over 1.5 million ounces of gold doré, and has contributed over US$1.6 billion in direct revenue to the Lao Government through taxes, royalties, and dividends, in addition to hundreds of millions of dollars in indirect benefits through employment, training, community, and local business development.

LXML's 'Discovery Deeps East Decline,' the first modern underground mine in the Lao PDR, which is currently under construction, is expected to extend Sepon's mine life for at least another ten years to 2033, contributing to employment, economic growth, and sustainable development in host communities.

In 2021, Sepon produced over 5,341 tonnes of copper and 192,988 ounces of gold doré. 2022 production guidance is approximately 224,000 ounces (7 tonnes) of gold doré and 8,000 tonnes of copper cathode.




Mr Boungnong Sidavong, Managing Director of LMD (2nd from left) and Mr Paul Harris, Executive President of Chifeng and General Manager of LXML (3rd from left) signed the agreement, witnessed by Mr Amphon Soudthiphon, Deputy Managing Director of LMD (1st from left) and Mr Saman Aneka, Managing Director of LXML (1st from right) at Crown Plaza, Vientiane Capital, Lao PDR on 11 July 2022/ທ່ານ ບຸນຍົງ ສີດາວົງ, ຜູ້ອຳນວຍການ ພຣລ (ທີ 2 ຈາກຊ້າຍ) ແລະ ທ່ານ ພໍ ແຮຣິສ, ປະທານກິຕິມະສັກບໍລິສັດຊີເຟິງ ແລະ ຜູ້ຈັດການໃຫຍ່ບໍລິສັດ ລຊມລ (ທີ 3 ຈາກຊາຍ) ໄດ້ລົງນາມສັນຍາ ພາຍໄດ້ການເປັນສັກຂີພະຍານຂອງ ທ່ານ ອຳພົນ ສຸດທິພົນ, ຮອງອຳນວຍການ ພຣລ (ທີ 1 ຈາກຊ້າຍ) ແລະ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ ບໍລິສັດ ລຊມລ (ທີ 1 ຈາກຂວາ) ຢູ່ ໂຮງແຮມ ຄຣາວ ພູລາຊາ, ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 11 ກໍລະກົດ 2022.

# ບໍລິສັດ ຊີເຟິງ ຈີຫຼົງ ຂຸດຄົ້ນຄຳ ໄດ້ລົງນາມໃນສັນຍາຮ່ວມມືກັບລັດວິສາຫະກິດ ພັດທະນາແຮ່ທາດລາວ

12 ກໍລະກົດ 2022

**ນະຄອນຫຼວງວຽງຈັນ, ສປປ ລາວ –** ໃນວັນທີ 11 ກໍລະກົດ 2022, ບໍລິສັດ ຊີເຟິງ ຈີຫຼົງ ຂຸດຄົ້ນຄຳ ໄດ້ລົງນາມໃນສັນຍາການຮ່ວມມືກັບ ລັດວິສາຫະກິດ ພັດທະນາແຮ່ທາດລາວ (ພຣລ) ເປັນຄັ້ງປະຫວັດສາດ. ສັນຍາດັ່ງກ່າວຈະຊ່ວຍໃຫ້ທຸກໆຝ່າຍສຸມໃສ່ການສຳຫຼວດ ແລະ ພັດທະນາແຫຼ່ງແຮ່ຕ່າງໆ ເພື່ອກາຍເປັນໂຄງການຂະໜາດໃຫຍ່ໃນອະນາຄົດ ຢູ່ໃນ ສປປ ລາວ.

**ທ່ານ ພໍ ແຮຣິສ, ປະທານກິຕິມະສັກຂອງ ບໍລິສັດຊີເຟິງ ຂຸດຄົ້ນຄຳ ແລະ ຜູ້ຈັດການໃຫຍ່ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (ລຊມລ)** ໄດ້ກ່າວວ່າ: "ສັນຍາສະບັບນີ້ ຍົກໃຫ້ເຫັນຄວາມໝາຍໝັ້ນທີ່ມີມາຍາວນານຂອງບໍລິສັດ ຊີເຟິງ ໃນການເຕີບໂຕ ແລະ ການພັດທະນາຂະແໜງການບໍ່ແຮ່ ຢູ່ໃນ ສປປ ລາວ."

"ຄະນະຂອງພວກເຮົາພວມເຮັດວຽກຮ່ວມມືກັບລັດຖະບານລາວເພື່ອພັດທະນາອີກຫຼາຍໆໂຄງການທີ່ຈະປະສົບຜົນສຳເລັດ ໃຫ້ຄືກັນກັບໂຄງການຄຳ-ທອງ ເຊໂປນ. ບໍລິສັດ ຊີເຟິງ ແລະ ລັດວິສາຫະກິດພັດທະນາແຮ່ທາດລາວ ຈະດຳເນີນການສຳຫຼວດ ເພື່ອລິເລີ່ມໂຄງການບໍ່ແຮ່ລະດັບໂລກ ເພື່ອສ້າງຜົນປະໂຫຍດຮ່ວມກັນຂອງຜູ້ມີສ່ວນຮ່ວມ ໂດຍສະເພາະແມ່ນປະຊາຊົນລາວ."

"ໂດຍຮ່ວມກັບລັດວິສາຫະກິດພັດທະນາແຮ່ທາດລາວ ແລະ ລັດຖະບານລາວ, ຄະນະພວກເຮົາພວມສ້າງພື້ນຖານອັນເຂັ້ມແຂງ ເພື່ອຂະຫຍາຍການລົງທຶນຢ່າງມະຫາສານໃນ ສປປ ລາວ ຂອງບໍລິສັດ ຊີເຟິງ. ບໍລິສັດ ຈະຮັກສາມາດຕະຖານສາກົນທີ່ເປັນທີ່ຮູ້ຈັກຢ່າງກວ້າງຂວາງ ໂດຍສະເພາະ ໃນດ້ານຄວາມປອດໄພ, ສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ການກໍ່ສ້າງພະນັກງານລາວ."

**ທ່ານ ບຸນຍິງ ສິດາວົງ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດພັດທະນາແຮ່ທາດລາວ** ໄດ້ກ່າວວ່າ: "ສັນຍາສະບັບນີ້ ຊຸກຍູ້ໃຫ້ມີການສຳຫຼວດເຂດທີ່ມີທ່າແຮງດ້ານແຮ່ທາດ ກ່ອນທີ່ຈະເຂົ້າສູ່ສັນຍາສຳປະທານ."

ລັດວິສາຫະກິດພັດທະນາແຮ່ທາດລາວ ມີຄວາມເຊື່ອໝັ້ນ ໃນດ້ານຄວາມຊຳນິຊຳນານ ແລະ ຄວາມພ້ອມຂອງ ບໍລິສັດ ຊີເຟີງ ທີ່ຈະນຳສູ່ຜົນສຳເລັດ ເຊິ່ງເຫັນໄດ້ຈາກຜົນງານດ້ານການດຳເນີນໂຄງການຂຸດຄົ້ນ ແລະ ປຸງແຕ່ງຄຳ-ທອງ ເຊໂປນ. ສະນັ້ນ, ການຊອກຫາເຂດທີ່ມີທ່າແຮງດ້ານແຮ່ທາດ ເປັນສິ່ງສຳຄັນຕັດສິນ ໃນນັ້ນ: ການສະໜັບສະໜູນຈາກລັດຖະບານ, ຂະແໜງການກ່ຽວຂ້ອງ ແລະ ຊຸມຊົນທ້ອງຖິ່ນ ແມ່ນມີຄວາມຈຳເປັນ ໃຫ້ແກ່ການພັດທະນາຂະແໜງບໍ່ແຮ່ ໃນ ສປປ ລາວ."

ລຊມລ ແລະ ລັດຖະບານລາວໄດ້ມີສາຍພົວພັນທີ່ດີ ແລະ ປະສົບຜົນສຳເລັດມາຫຼາຍກວ່າ 30 ປີ. ບໍ່ຄຳ-ທອງ ເຊໂປນ ມີຄວາມພາກພູມໃຈທີ່ໄດ້ຮັກສາມາດຕະຖານສາກົນສູງທີ່ສຸດ ແລະ ສາມາດຮັກສາມາດຕະຖານ A+ ຊຶ່ງອອກໃຫ້ໂດຍກະຊວງພະລັງງານ ແລະ ບໍ່ແຮ່ ຢ່າງສະເໝີມາ ແລະ ເປັນທີ່ຍອມຮັບວ່າ ໄດ້ເປັນແບບຢ່າງສຳລັບບໍລິສັດບໍ່ແຮ່ອື່ນໆ ຢູ່ໃນ ສປປ ລາວ.

ປະຈຸບັນນີ້, ບໍລິສັດ ຊີເຟີງ ຈີຫຼົງຂຸດຄົ້ນຄຳ ໄດ້ຖືຫຸ້ນ 90 ສ່ວນຮ້ອຍໃນ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ ເຊິ່ງເປັນເຈົ້າຂອງ ແລະ ດຳເນີນໂຄງການຄຳ-ທອງ ເຊໂປນ ຢູ່ ແຂວງສະຫວັນນະເຂດ.

ນັບແຕ່ເລີ່ມດຳເນີນງານໃນປາຍປີ 2003 ເປັນຕົ້ນມາ, ບໍລິສັດ ລຊມລ ໄດ້ຜະລິດແຜ່ນທອງຫຼາຍກວ່າ 1,1 ລ້ານ ໂຕນ ແລະ ແທ່ງຄຳກວ່າ 1,5 ລ້ານ ອອນສ໌ ພ້ອມທັງໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ ໃຫ້ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ໂດຍຜ່ານການຊຳລະພາສີ-ອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ ບໍລິສັດ ກໍໄດ້ສ້າງຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາ ສະຫະລັດ ເຂົ້າໃນການສ້າງວຽກເຮັດງານທຳ, ການຝຶກອົບຮົມ, ການພັດທະນາຊຸມຊົນ ແລະ ການສົ່ງເສີມທຸລະກິດທ້ອງຖິ່ນ.

'ບໍ່ແຮ່ໃຕ້ດິນດິສໂຄເວີຣີ-ດີບສ໌' ເຊິ່ງຈະເປັນບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດໃນ ສປປ ລາວ ແມ່ນພວມດຳເນີນການກໍ່ສ້າງ ຊຶ່ງຄາດວ່າ ຈະສາມາດຍືດອາຍຸການຂອງບໍ່ຄຳ-ທອງ ເຊໂປນ ອອກໄປອີກຢ່າງຕ່ຳ 10 ປີ ໄປເຖິງປີ 2033. ໂຄງການຂຸດຄົ້ນບໍ່ແຮ່ ຈະປະກອບສ່ວນໃນການສ້າງວຽກເຮັດງານທຳ, ການເຕີບໂຕຂອງເສດຖະກິດ ແລະ ການພັດທະນາແບບຍືນຍົງໃນຊຸມຊົນເຈົ້າພາບ.

ໃນປີ 2021, ໂຄງການຄຳ-ທອງ ເຊໂປນ ໄດ້ຜະລິດທອງຫຼາຍກວ່າ 5.341 ໂຕນ ແລະ ແທ່ງຄຳກວ່າ 192.988 ອອນສ໌. ໃນປີ 2022, ຄາດວ່າຈະສາມາດຜະລິດແທ່ງຄຳໄດ້ 224.000 ອອນສ໌ (7 ໂຕນ) ແລະ ແຜ່ນທອງ 8.000 ໂຕນ.

---



©Lane Xang Minerals Limited 2021. All Right Reserved.